**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.
ຫ້ອງການ ຄຊກລ

ເລກທີ່ 908 /ຫຄຊກລ.ຄພ.

ນະຄອນຫລວງວຽງຈັນ, ວັນທີ: 19 ຕຸລາ 2023.

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ.

**ເລື່ອງ:** ຜົນຂອງການລົງຕິດຕາມກວດກາການເຄື່ອນໄຫວ ຂອງໂຄງການ ເກັບກູ້ລະເບີດ ແຫ່ງຊາດ(ຄກລ) ປະຈຳແຂວງ ສະຫວັນນະເຂດ.

## I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 855/ຫຄຊກລ ລົງວັນ 31 ສິງຫາ 2023 ໃນວັນທີ 05 ຫາ 14 ຕຸລາ 2023, ໜ່ວຍງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ສົມທົບກັບໂຄງການເກັບກູ້ລະເບີດແຫ່ງຊາດ(ຄກລ) ປະຈຳແຂວງ ສະຫວັນນະເຂດ, ໄດ້ລົງເຄື່ອນໄຫວຊຸກຍູ້, ກວດກາຕິດຕາມການຈັດຕັ້ງປະຕິບັດວຽກງານການເກັບກູ້ ແລະ ທຳລາຍລະເບີດ ຢູ່ແຂວງ ສະຫວັນນະເຂດ.

**ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:**

1. ທ່ານ ບຸນທະວີ ແກ້ວວິໄລ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ,
2. ທ່ານ ວິໄລສັກ ໄຊປັນຍາ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ,
3. ທ່ານ ບຸນປອນ ທຳມະວົງສາ ວິຊາການຄຸ້ມຄອງຄຸນນະພາບ/ແພດຫ້ອງການ ຄຊກລ,
4. ທ່ານ ສັນຕິ ແກ້ວວິໄຊ ຂັບລົດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ,
5. ທ່ານ ຕຸ້ຍ ໄຊຍະສານ ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ,
6. ທ່ານ ຄຳພູວົງ ຄະນະຫ້ອງການ ຄກລ ແຂວງ ສະຫວັນນະເຂດ,
7. ທ່ານ ສະກຸນຊັບ ຄະນະວິຊາການ ຄກລ ແຂວງ ສະຫວັນນະເຂດ.

**ຜູ້ຕິດຕາມຈາກ ຄກລ ແຂວງ ສະຫວັນນະເຂດ ;**

1 ທ່ານ ພິມມາ ເຄືອບມະວົງ ຮອງຜູ້ປະສານງານ(ຄກລ) ປະຈຳ ແຂວງ ສະຫວັນນະເຂດ,

2 ທ່ານ ສົມພອນ ພົມສະຫວັນ ຊ່ຽວຊານທຳລາຍລະເບີດ(SEOD)ຄກລປະຈຳແຂວງສະຫວັນນະເຂດ,

3 ທ່ານ ນ.ໄກ່ອຳພອນ ພັນທະລີ ຫົວໜ້າແພດ(ຄກລ) ປະຈຳແຂວງສະຫວັນນະເຂດ.

**ຈຸດປະສົງໃນການຕິດຕາມກວດກາ**

ເພື່ອເປັນການຊຸກຍູ້ຕິດຕາມກວດກາການປະຕິບັດງານ, ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການເຊັ່ນ: ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການສຳຫຼວດ, ເກັບກູ້,ທຳລາຍ ລບຕ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ເພື່ອຊຸກຍູ້ປັບປຸງການປະຕິບັດງານ, ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນປະຈຳປີ 2023, ເພື່ອຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

**ຈຳນວນພະນັກງານ ແລະ ຄຸນວຸດທິພະນັກງານ**

ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ປະຈຳ ແຂວງ ສະຫວັນນະເຂດ ມີພະນັກງານທັງໝົດ 285 ຄົນ, ຍິງ 80 ຄົນ, ພະນັກງານຫ້ອງການມີ 16 ຄົນ, ຍິງ 07ຄົນ, ພະນັກງານປະຈຳສະໜາມມີ 269 ຄົນ, ຍິງ 73 ຄົນ, ປະກອບທີມງານໂຄສະນາສຶກສາຄວາມສ່ຽງ 01 ທີມ, ສຳຫຼວດບໍ່ແມ່ນວິຊາການ 01 ທີມ, ສຳຫຼວດທາງດ້ານວິຊາການ 03 ທີມ, ທີມງານກວດກູ້ 19 ທີມ, ທີມຕັດຫຍ້າ 04 ທີມ ແລະ ລວມທັງແມ່ບ້ານ ແລະ ນາຍຍາມ. ການປະກອບໂຄງຮ່າງຈັດການຕັ້ງແມ່ນຖືກຕ້ອງ ແລະ ວິຊາການເກັບກູ້ທັງໝົດທີ່ກ່າວມານັ້ນໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.

- **ກວດກາລະບົບເອກະສານ**

ໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳ ແຂວງ ສະຫັວນນະເຂດ ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບ ເຊັ່ນ: ແມ່ນບົດລາຍງານການສຳຫຼວດຂັ້ນສອງ, ບົດລາຍງານຜົນສຳເລັດຂັ້ນສາມ ແບບຟອມຄວບຄຸ້ມຄຸນນະພາບພາຍໃນ, ປຶ້ມບັນທຶກປະຈຳວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈງໄດ້, ແຜນຮອງຮັບອຸບັດຕິເຫດ, ໝວດເລືອດ, ອາການແພ້ຕ່າງໆຂອງພະນັກງານ, ມີບັນດາເອກະສານການປະເມີນວຽກງານເກັບກູ້ອີກທີ່ກຳລັງພັດທະນາໃໝ່ເຫັນວ່າມີເນື້ອໃນຄົບຖ້ວນຕາມມາດຕະຖານການປະຕິບັດງານສອດຄ່ອງກັບມາດຕະຖານແຫ່ງຊາດທີ່ໄດ້ກຳນົດໄວ້.

- **ການເຄື່ອນໄຫວຕາມແຜນປີ 2023.**

ການເຄື່ອນໄຫວວຽກງານແມ່ນປະຕິບັດຕາມແຜນປະຈຳປີ 2023 ເຊິ່ງມີໄລຍະ 09 ເດືອນ ທີ່ໄດ້ເຄື່ອນໄຫວຢູ່ 08 ຕົວເມືອງຂອງແຂວງ ສະຫັວນນະເຂດ ຄື: ເມືອງ ເຊໂປນ, ນອງ, ວິລະບູລີ, ພິນ, ພະລານໄຊ, ອາດສະພອນ, ທ່າປາງທອງ, ອາດສະພັງທອງ,ເຊິ່ງໄດ້ຮັບທຶນສະໜັບສະໜູນຈາກລັດຖະບານສະຫະລັດອາເມລິກາ.

**ຜົນສຳເລັດແຜນເຄື່ອນໄຫວວຽກງານດັ່ງນີ້:**

- ວຽກງານໂຄສະນາສຶກສາຄວາມສຽ່ງໄພEORE, 50 ບ້ານ ປະຕິບັດໄດ້ 39 ບ້ານ ເທົ່າກັບ 78 %;
- ວຽກງານສຳຫລວດ NTS, 12 ບ້ານ ປະຕິບັດໄດ້ 12 ບ້ານ ເທົ່າກັບ 100%;
- ວຽກງານສຳຫລວດTS/CHA, 9.000.000 ມ² ປະຕິບັດໄດ້ 4,568,581 ມ² ເທົ່າກັບ 51%;
- ວຽກງານເກັບກູ້ເນື້ອທີ່ທັງໝົດ 6,658,311 ມ² ປະຕິບັດໄດ້ 2,773,449 ມ² ເທົ່າກັບ 42% ພົບບົມບີ 1139 ໜ່ວຍ, ບົມໃຫຍ 01 ໜ່ວຍ ແລະ ພົບສຳພາວຸດອື່ນໆ 390 ໜ່ວຍ;
- ວຽກງານທຳລາຍເຄື່ອນທີ່ 813 ໜ່ວຍ, ບົມໃຫ່ຍ 02 ໜ່ວຍ ສຳພາວຸດອື່ນໆ 210 ໜ່ວຍ

- **ການລົງຕິດຕາມຢູ່ພາກສະໜາມ QA,**

ລົງຊຸກຍູ້ຕິດຕາມສະໜາມທີ່ກຳລັງປະຕິບັດການເກັບກູ້AC 07 ບ້ານໂພສີ ເມືອງພະລານໄຊ ແລະ ສະໜາມ TS. 03. ຢູ່ບ້ານໂນນມີໄຊ.ເມືອງພະລານໄຊ. ແລະ ຕິດຕາມການປະຕິບັດການສະໜັບສະໜູນທາງດ້ານການແພດການຝຶກຕົວຈິງໃນການຊ່ວຍເຫຼືອຄົນເຈັບໃນກໍລະນີເກີດເຫດສຸກເສີນຢູ່ພາກສະໜາມເກັບກູ້ ແລະ ສະໜາມTS ກວດກາອຸປະກອນການແພດ ນອກຈາກນີ້ຍັງໄດ້ລົງຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວຈຳນວນ 08 ສະໜາມ ເຊິ່ງມີເນື້ອທີ່ທັງໝົດ173,934 ມ², ຄວບຄຸມຄຸນນະພາບຫຼາຍກວ່າ 2% ເທົ່າກັບ 19% ຢູ່ເມືອງເຊໂປນ, ເມືອງນອງ, ແລະ ເມືອງ ວິລະບູລີເມືອງ ພິນແລະເມືອງ ພະລານໄຊ. ເພື່ອເປັນການຢັ້ງຢືນສະໜາມດັ່ງກ່າວມີຄຸນນະພາບ, ມີຄວາມປອດໄພຕໍ່ຜູ້ນຳໃຊ້ເນື້ອທີ່ດິນ.

- **ລົງຕິດຕາມກວດກາຄວບຄຸມຄຸນນະພາບ(QC)ສະໜາມທີ່ກວດສາເລັດແລ້ວມີຈານວນ 08 ສະໜາມ ມີ 05 ເມືອງແລະ 06 ບ້ານ ມີລາຍລະອຽດດັ່ງລຸ້ມນີ້:**

**1. ເມືອງ ວິລະບູລີ ບ້ານ ນໍ້າມະຈຸ ມີ 02 ສະໜາມ.**

-Task ID UXO Lao_AC_2023_1312100_004_S=22,101 m2 (20x25)=500m2,

-Task ID UXO Lao_AC_2023_1312100_002_S=15,075m2 (20x20)=400m2,

**2. ເມືອງ ນອງ ມີ 02 ສະໜາມ ບ້ານ ຕັງອາໄລເກົ່າ ແລະ ບ້ານ ປະເຊັຍ.**

-Task ID UXO Lao_AC_2023_1306083_004_S=9481m2 (15x20)=300m2,

-Task ID UXO Lao_AC_2023_1306063_003_S=13,093m2 (15x20)=300m2,

**3. ເມືອງ ເຊໂປນ ມີ 01 ສະໜາມ ບ້ານ ແກ້ງກີວ.**

-Task ID UXO Lao_AC_2023_1305149_001_S=14,999m2 (20x20)=400m2,

**4. ເມືອງ ພະລານໄຊ ມີ 01 ສະໜາມ ບ້ານ ສະໜູນ.**

-Task ID UXO Lao_AC_2023_1315069_001_S=48,887m2 (30x35)=1050m2,

**5. ເມືອງ ພີນ ມີ 02 ສະໜາມ ບ້ານ ຕາດໄຮເຊ.**

-Task ID UXO Lao_AC_2023_1304091_015_S=25,419m2 (20x30)=600m2,

-Task ID UXO Lao_AC_2023_1304091_016_S=24,878m2 (20x30)=600m2,

## II. ຜົນການກວດກາ

ຜ່ານການລົງຕິດຕາມກວດກາຂອງຄະນະທີມງານສັງເກດເຫັນໄດ້ດັ່ງນີ້:

- **ຈຸດດີ.**

1. ການປະຕິບັດງານຂອງໂຄງການເກັບກູ້ລະເບີດແຫ່ງຊາດ ຄກລ ປະຈໍາ ແຂວງ ສະຫັວນນະເຂດໄດ້ເຄື່ອນໄຫວວຽກງານພາຍໃຕ້ລະບຽບຕາມມາດຕະຖານການປະຕິບັດງານທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ.
2. ການຈັດຕັ້ງປະຕິບັດວຽກງານເກັບກູ້ລະເບີດຢູ່ພາກສະໜາມແມ່ນມີຄວາມປອດໄພ.
3. ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ກໍ່ລ້ວນແຕ່ໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.
4. ສະໜາມເກັບກູ້ທີ່ສໍາເລັດແລ້ວແມ່ນຜ່ານ ການຄວບຄຸມຄຸນນະພາບ, ບໍ່ພົບເສດເຫຼັກໃຫຍ່ກວ່າເຄິ່ງໜຶ່ງບົມບີ 26 ( ½ blu26 ), ສະໜາມດັ່ງກ່າວແມ່ນມີຄວາມປອດໄພສາມາດນໍາໃຊ້ເນື້ອທີ່ດິນຕາມຈຸດ ປະສົງໃນຄວາມເລິກຂອງລະບຽບການເກັບກູ້ 25 ຊັງຕີແມັດ.
5. ການນໍາສະເໜີລາຍງານຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ, ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ, ສະຖານທີປະຕິບັດທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື່ອ, ວິດຖ່າຍ, ບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ ແລະ ບ່ອນເກັບມ້ຽນລະເບີດທີ່ເຄື່ອນຍ້າຍໄດ້, ສິ່ງທີ່ກ່າວຂ້າງເທິງມານັ້ນເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານ ແລະສອດຄ່ອງກັບມາດຕະຖານແຫ່ງຊາດ.

- **ຂໍ້ຄົງຄ້າງ.**

1. ການສາທິດຈໍາລອງເຫດການເວລາເກີດອຸປະຕິເຫດຢູ່ສະໜາມທີ່ກໍາລັງປະຕິບັດງານມີຂໍ້ສັງເກດເຫັນດັ່ງນີ້: ການຄວບຄຸມສະໜາມຂອງຫົວໜ້າທີມ AC&TS ໃນຄະນະນັ້ນຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນເປັນຕົ້ນແມ່ນການຈັດຄົນເວນຍາມສະໜາມ, ການລາຍງານເຫດການຫາຜູ້ປະຈໍາການຍັງບໍ່ຈະແຈ້ງ ແລະ ບໍ່ໄດ້ເຮັດເອກກະສານຕິດຕາມຜູ້ບາດເຈັບປະຈໍາສະໜາມ ເອກະສານຊອ້ນທ້າຍ 8E,
2. ໃຫ້ຫົວໜ້າທີມກວດກູ້ເອົາໃຈໃສ່ບັນທຶກວຽກງານທີ່ຕົນໄດ້ປະຕິບັດໃນແຕ່ລະວັນໃສ່ແບບຟອມ ຄິວເອແລະຄິວຊີ ແລະ ເອກກະສານຕິດຕາມການນໍາໃຊ້ທາດລະເບີດປະຈໍາສະໜາມ.
3. ໃຫ້ຫົວໜ້າທີມສໍາຫຼວດດ້ານວິຊາການເອົາໃຈໃສ່ຕື່ມການລາຍງານບັນດາເຄື່ອງໝາຍ, ອຸປະກອນທີ່ນໍາໃຊ້ຢູ່ສະໜາມ ແລະ ລະບຽບການເຂົ້າຢ້ຽມສະໜາມຕໍ່ແຂກທີ່ມາຢ້ຽມຢາມ.

- ຕາມການລົງຕິດຕາມກວດກາອຸປະກອນການແພດຂອງຫົວໜ້າທີມAC&TS ແລະ ຕິດຕາມການຝຶກຊ້ອມແຜນຮັບມືເກີດອຸປະຕິເຫດປະຈຳສະໜາມສັງເກດໄດ້ດັ່ງນີ້, ອຸປະກອນການແພດຍັງບໍ່ຄົບຕາມຈານວນເຊັ່ນ: ຜ້າປົກບາດແຜໃຫ່ຍຂະໜາດ 11 ນີ້ວ ມີຈຳນວນ 01 ຜືນ, ສາຍຮັດຫ້າມເລືອດມີຈານວນ 01 ເສັ້ນ, ຕາມລາຍການແມ່ນມີ 02 ເສັ້ນ.
- ວິທີນັ່ງເຮັດ CPR ຂອງແພດຍັງບໍ່ທັນຖືກຕາມເຕັກນິກ, ຜູ້ຊ່ວຍແພດຍັງບໍ່ນໍາໃຊ້ ອາບູແບັກ ໄດ້ດີເທົ່າທີ່ຄວນ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຊາບ

| | |
|---|---|
| ເຖິງແມ່ ຫົວໜ້າຫ້ອງການ ຄຊກລ. | ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ |
| ຫ້ອງການ ຄຊກລ | |
| ບຸນເພັງ ສີສະຫວັດ | ອິໄລສັກ. |

ບ່ອນສົ່ງ:
ສົ່ງ ຄກລ ສູນກາງ 1 ສະບັບ ເພື່ອລາຍງານ.
ສົ່ງ ຄກລ ແຂວງ ສະຫວັນນະເຂດ 1 ສະບັບ ເພື່ອຈັດຕັ້ງປະຕິບັດ.
ຫ້ອງການ ຄຄກລຂ ເກັບມ້ຽນ 1 ສະບັບ
ຫ້ອງການ ຄຊກລ ເພື່ອເກັບມ້ຽນ 1 ສະບັບ. ເພື່ອລາຍງານ.

ບ້ານ ທົ່ງສ້າງນາ, ຕູ້ປນ: 7261, ນະຄອນຫຼວງ, ໂທລະສັບ: 856 21 262416, 262 386, ແຟັກ: 856 21 262 386,
ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la